# ການກວດກັ່ນເບິ່ງກ່ອນການເຂົ້າ ແລະ ການກວດເບິ່ງຜູ້ອາສັຍຢູ່ຄືນ

## *ລາຍລະອຽດສຳລັບຄອບຄົວ*

## **PASRR** ແມ່ນຫຍັງ?

ການກວດກັ່ນເບິ່ງກ່ອນການເຂົ້າ ແລະ ການກວດເບິ່ງຜູ້ອາສັຍຢູ່ຄືນ(PASRR) ແມ່ນການດຳເນີນການກວດກັ່ນເບິ່ງ ແລະ ການຕີຣາຄາປະເມີນຜົນສຳລັບບຸກຄົນຜູ້ທີ່ໄດ້ຖືກສົ່ງໄປເອົາການເບິ່ງແຍງປິ່ນປົວຢູ່ຕາມສະຖານທີ່ເບິ່ງແຍງຄົນຊຣາ ແລະ ໄດ້ຖືກພິຈາຣະນາເຫັນວ່າມີຄວາມເສັ່ຽອິງລະດ້ານສະຕິປັນຍາ ຫລື ສະພາບທີ່ກ່ຽວຂ້ອງນຳ. ໂຄງການອັນນີ້ຊ່ວຍເອົາໃຫ້ການບໍຣິການເພີ້ມເຕີມທີ່ບຸກຄົນເຫລົ່ານີ້ອາດຈະຕ້ອງການ ແລະ ຍັງສາມາດຊ່ວຍເຫລືອໄດ້ອີກຄືກັນບຸກຄົນຜູ້ທີ່ສົນໃຈໃນການກັບຄືນໄປສູ່ຊຸມນຸມຊົນຂອງເຂົາເຈົ້າໃຫ້ຊອກຫາເອົາການອູ້ມຊູທີ່ຕ້ອງການ.

ການບໍຣິການສ່ວນບຸກຄົນທີ່ຖືກເອື້ອເຟື້ອໃຫ້ໂດຍ PASRR ມີຈຸດປະສົງທີ່ຈະຊ່ວຍບຸກຄົນໃຫ້ເພີ້ມຄວາມຊຳນານໃນການທຳງານ, ຮັກສາຄວາມເປັນເອກະຣາດໄວ້ ແລະ ດຳເນີນຕິດແທດນຳຊຸມນຸມຊົນຂອງເຂົາເຈົ້າ.ບຸກຄົນທຸກໆຄົນຜູ້ທີ່ກຳລັງໄດ້ຮັບການບໍຣິການຜ່ານໂຄງການ PASRR ມີການຕີຣາຄາປະເມີນຜົນລວມສູນໃສ່ບຸກຄົນຊຶ່ງຈະພິຈາຣະນາເບິ່ງຄວາມຕ້ອງການ ແລະ ການບໍຣິການທີ່ຈະຖືກເອົາໃຫ້. ການບໍຣິການຈະລວມເອົາການໃຫ້ຄຳປຶກສາແກ່ຄອບຄົວ ຫລື ໝູ່ເພື່ອນ, ການເຂົ້າເຖິງຊຸມນຸມຊົນ, ການອູ້ມຊູດ້ານວຽກງານ ຫລື ການປະພຶດ,  ການບຳບັດດ້ານການແຕ່ງຕົວ ຫລື ເທັກໂນໂລຈີຊ່ວຍເຫລືອ.



### ຄຳຖາມທີ່ຖືກຖາມກັນຢູ່ເລື້ອຍໆກ່ຽວກັບໂຄງການ **PASRR**:

***ຄອບຄົວສາມາດເຂົ້າມາຮ່ວມນຳໄດ້ບໍ່ໃນການຕີຣາຄາປະເມີນຜົນ PASRR ຂອງສະມາຊິກຄອບຄົວ?***

ຄອບຄົວຈະຖືກແນະນຳຊຸກຍູ້ໃຫ້ມາຮ່ວມນຳການປະເມີນຜົນ PASRR Kອງຄົນຮັກຂອງເຂົາເຈົ້າ, ຖ້າຫາກວ່າແມ່ນສິ່ງທີ່ສະມາຊິກຄອບຄົບຜູ້ທີ່ຖືກປະເມີນຜົນຕ້ອງການ. ຜູ້ປົກຄອງຕາມກົດໝາຍຍັງຈະຖືກເຊີນໃຫ້ເຂົ້າມາຮ່ວມອີກຄືກັນ.



***ການບໍຣິການ PASRR ຈະມີໄວ້ໃຫ້ຫລັງຈາກບຸກຄົນໄດ້ຖືກປ່ອຍຕົວອອກຈາກການເບິ່ງແຍງປິ່ນປົວຢູ່ຕາມສະຖານທີ່ເບິ່ງແຍງຄົນຊຣາບໍ່?***

ການບໍຣິການ PASRR ພິເສດສະເພາະໄດ້ຖືກຕີຄວາມໝາຍໂດຍກົດຣະບຽບ Medicaid ຂອງຣັດຖະບານກາງ ແລະ ມີໄວ້ໃຫ້ແກ່ບຸກຄົນຜູ້ທີ່ມີຄວາມເສັ່ຽອິງລະທາງດ້ານສະຕິປັນຍາ ຫລື ສະພາບທີ່ກ່ຽວຂ້ອງນຳເທົ່ານັ້ນໃນຂະນະທີ່ເຂົາເຈົ້າຢູ່ພາຍໃຕ້ການເບິ່ງແຍງດູແລໂດຍສະຖານທີ່ເບິ່ງແຍງຄົນ ຊຣາ. ຫລັງຈາກບຸກຄົນໄດ້ຖືກປ່ອຍຕົວອອກມາເຂົາເຈົ້າອາດຈະມີເງື່ອນໄຂໄດ້ຮັບການອູ້ມຊູຈາກຊຸມນຸມຊົນຫລາຍໆແນວ.  ຜູ້ປະເມີນຜົນ PASRR ຊ່ວຍສົ່ງລູກຄ້າໄປຫາໂຄງການທີ່ເຂົາເຈົ້າອາດຈະມີສິດໄດ້ຮັບ.

***ບຸກຄົນຜູ້ທີ່ພົວພັນຢູ່ໃນໂຄງການ PASRR ຈະຖືກເຮັດໃຫ້ອອກຈາກສະຖານທີ່ເບິ່ງແຍງຄົນຊຣາກ່ອນທີ່ເຂົາເຈົ້າຈະພຽບພ້ອມແລ້ວບໍ່?***

ບາງຄົນມີຄວາມຫ່ວງໄຍຂ້ອງໃຈວ່າສະມາຊິກຄອບຄົວຂອງເຂົາເຈົ້າຈະຖືກບັງຄັບໃຫ້ອອກຈາກສະຖານທີ່ເບິ່ງແຍງຄົນຊຣາກ່ອນທີ່ເຂົາເຈົ້າຈະພຽບພ້ອມ.  ສຳລັບຄົນອາສັຍຢູ່ໃນຣັດວໍຊິງຕັນທຸກໆຄົນ, ເງື່ອນໄຂໄດ້ຮັບການເບິ່ງແຍງປິ່ນປົວຢູ່ຕາມສະຖານທີ່ເບິ່ງແຍງຄົນຊຣາຈະຖືກພິຈາຣະນາເບິ່ງໂດຍສະພາບການພະຍາບານ ແລະ ຄວາມຕ້ອງການໃນການອູ້ມຊູຂອງບຸກຄົນນັ້ນ. PASRR ຈະບໍ່ເຮັດໃຫ້ບຸກຄົນອອກຈາກສະຖານທີ່ເບິ່ງແຍງຄົນຊຣາຈັກເທື່ອກ່ອນທີ່ເຂົາເຈົ້າຈະພຽບພ້ອມແລ້ວ.

ລາຍລະອຽດມີໄວ້ໃຫ້ຢູ່ສະເມີກ່ຽວກັບທາງເລືອກເອົາແນວອື່ນໆຢູ່ໃນຊຸມນຸມຊົນສຳລັບບຸກຄົນຜູ້ທີ່ຕ້ອງການທີ່ຈະ ຫລື ຜູ້ທີ່ສາມາດທີ່ຈະອອກຈາກການເບິ່ງແຍງປິ່ນປົວຢູ່ຕາມສະຖານທີ່ເບິ່ງແຍງຄົນຊຣາ.

ສຳລັບລູກຄ້າຜູ້ທີ່ໄດ້ຮັບການບໍຣິການຢູ່ໃນ ***Adams, Chelan, Douglas, Grant, Ferry, Lincoln, Okanogan, Pend Oreille Spokane, Stevens*** ຫລື ***Whitman counties*** ໂທຫາ (509) 329-2900 ຫລື ສົ່ງອີແມລ໌ໄປຫາຄະນະທີມງານໄດ້ທີ່ DDAR1pasrrteam@dshs.wa.gov

ສຳລັບລູກຄ້າຜູ້ທີ່ໄດ້ຮັບການບໍຣິການຢູ່ໃນ ***Asotin, Benton, Franklin, Garfield, Kittitas, Klickitat, Walla Walla*** ແລະ ***Yakima counties*** ໂທຫາ (509) 225-7970 ຫລື ສົ່ງອີແມລ໌ໄປຫາຄະນະທີມງານໄດ້ທີ່ DDAR1pasrrteam@dshs.wa.gov

ສຳລັບລູກຄ້າຜູ້ທີ່ໄດ້ຮັບການບໍຣິການຢູ່ໃນ ***Island, San Juan, Skagit, Snohomish*** ຫລື ***Whatcom counties*** ໂທຫາ (425) 339-4833 ຫລື ສົ່ງອີແມລ໌ໄປຫາຄະນະທີມງານໄດ້ທີ່ DDAR2pasrrteam@dshs.wa.gov.

ສຳລັບລູກຄ້າຜູ້ທີ່ໄດ້ຮັບການບໍຣິການຢູ່ໃນ ***King County*** ໂທຫາ(206) 568-5700 ຫລື ສົ່ງອີແມລ໌ໄປຫາຄະນະທີມງານໄດ້ທີ່ DDAR2pasrrteam@dshs.wa.gov.

ສຳລັບລູກຄ້າຜູ້ທີ່ໄດ້ຮັບການບໍຣິການຢູ່ໃນ ***Clallam, Jefferson, Kitsap*** ຫລື ***Pierce counties*** ໂທຫາ (253) 404-5500 ຫລື ສົ່ງອີແມລ໌ໄປຫາຄະນະທີມງານໄດ້ທີ່ DDAR3pasrrteam@dshs.wa.gov.

ສຳລັບລູກຄ້າຜູ້ທີ່ໄດ້ຮັບການບໍຣິການຢູ່ໃນ ***Clark, Cowlitz, Grays Harbor, Lewis, Mason, Skamania, Thurston*** ແລະ ***Wahkiakum counties*** ໂທຫາ (360) 725-4250 ຫລື ສົ່ງອີແມລ໌ໄປຫາຄະນະທີມງານໄດ້ທີ່ DDAR3pasrrteam@dshs.wa.gov.

Washington State Department of Social & Health Services

*Transforming lives*

**ຮຽນຮູ້ກ່ຽວກັບໂຄງການ PASRR ໄດ້ທີ່ dshs.wa.gov/pasrr**

*ຕິດຕໍ່ຫາຄະນະທີມງານ PASRR ຢູ່ໃນເຂດຂອງທ່ານ!*